Seattle Public Utilities

# ຂໍ້ກຳນົດດ້ານການບໍລິການອາຫານ

**ການຣີໄຊເຄີນ:** ບັນດາຫົວໜ່ວຍທຸລະກິດໃນ Seattle ບໍ່ໄດ້ຮັບອະນຸຍາດໃຫ້ເອົາສິ່ງຂອງທີ່ສາມາດນຳໄປຣີໄຊເຄີນໄດ້ຖິ້ມລົງໃນຂີ້ເຫຍື້ອ.

**ການຍ່ອຍສະຫຼາຍ:** ບັນດາຫົວໜ່ວຍທຸລະກິດໃນ Seattle ບໍ່ໄດ້ຮັບອະນຸຍາດໃຫ້ເອົາອາຫານ ແລະກະດາດທີ່ສາມາດຍ່ອຍສະຫຼາຍໄດ້ ຖິ້ມລົງໃນຂີ້ເຫຍື້ອ.

**ບັນຈຸພັນ:** ບັນດາຫົວໜ່ວຍທຸລະກິດບໍລິການອາຫານໃນ Seattle ບໍ່ໄດ້ຮັບອະນຸຍາດໃຫ້ໃຊ້ພາຊະນະບໍລິການອາຫານແບບໃຊ້ຄັ້ງດຽວແລ້ວຖິ້ມ. ບັນບຈຸພັນອາຫານ ແລະ ເຄື່ອງດື່ມທີ່ໃຊ້ຄັ້ງດຽວແລ້ວຖິ້ມ ຕ້ອງສາມາດຣີໄຊເຄີນໄດ້ ຫຼື ສາມາດຍ່ອຍສະຫຼາຍໄດ້ (ເບິ່ງຂ້າງລຸ່ມນີ້).



## ຫ້າມນຳສິ່ງຂອງທີ່ສາມາດຣີໄຊເຄີນໄດ້ຖິ້ມລົງໃນຂີ້ເຫຍື້ອ:

*ປະມວນກົດລະບຽບເທດສະບານ Seattle (21.36.083)*

**ຮຽກຮ້ອງໃຫ້ບັນດາທຸລະກິດທັງໝົດຕ້ອງຣີໄຊເຄີນ** ເຈ້ຍ, ເຈ້ຍແຂງ, ຂວດ ແລະ ໂຖແກ້ວ, ຈອກ ແລະ ເຈ້ຍປລາສະຕິກ, ຂວດ ແລະ ໂຖປລາສະຕິກ, ກະປ໋ອງລູມີນຽມ ແລະ ກົ່ວ. ການເອົາສິ່ງຂອງເຫຼົ່ານີ້ຖິ້ມລົງໃນຂີ້ເຫຍື້ອ ແມ່ນຜິດກົດໝາຍ.

(ມີຜົນບັງຄັບໃຊ້ໃນວັນທີ 1 ກໍລະກົດ 2014)



## ອາຫານ ບໍ່ອະນຸຍາດໃຫ້ຖິ້ມລົງໃນຂີ້ເຫຍື້ອ:

*ປະມວນກົດລະບຽບເທດສະບານ Seattle (21.36.082)*

**ຮຽກຮ້ອງໃຫ້ບັນນດາທຸລະກິດທັງໝົດຕ້ອງຍ່ອຍສະຫຼາຍອາຫານທຸກຢ່າງ** ແລະ ກະດາດບໍ່ເຄືອບອາຫານທີ່ເປື້ອນ ເຊັ່ນ: ຜ້າເຊັດປາກ, ຜ້າເຊັດຕົວ ແລະ ກ່ອງພິດຊ່າ. ການເອົາສິ່ງຂອງເຫຼົ່ານີ້ຖິ້ມລົງໃນຂີ້ເຫຍື້ອ ແມ່ນຜິດກົດໝາຍ.

(ມີຜົນບັງຄັບໃຊ້ໃນວັນທີ 1 ກໍລະກົດ 2015)

## ຄຳສັ່ງກ່ຽວກັບບັນຈຸພັນອາຫານ: ປະມວນກົດລະບຽບເທດສະບານ Seattle (21.36.086)



**ຮັບປະທານອາຫານໃນຮ້ານ:** ບັນດາຮ້ານອາຫານ ແລະ ຫົວໜ່ວຍທຸລະກິດບໍລິການອາຫານ **ຕ້ອງໃຊ້ວັດຖຸທີ່ສາມາດຍ່ອຍສະຫຼາຍໄດ້ ຫຼື ພາຊະນະບໍລິການທີ່ທົນທານ** ສຳລັບການບໍລິການການຮັບປະທານອາຫານໃນຮ້ານ.

(ມີຜົນບັງຄັບໃຊ້ໃນວັນທີ 1 ກໍລະກົດ 2010)




**ຊື້ໄປກິນຂ້າງນອກ:** ບັນຈຸພັນ **ຈະຕ້ອງສາມາດຣີໄຊເຄີນໄດ້ ຫຼື ສາມາດຍ່ອຍສະຫຼາຍໄດ້** ສຳລັບການບໍລິການຊື້ໄປກິນຂ້າງນອກ. ບັນຈຸພັນເຈ້ຍສີນ້ຳຕານເຄືອບປລາສະຕິກ ແມ່ນຖືກຫ້າມ.



(ການປັບປຸງມີຜົນບັງຄັບໃຊ້ໃນວັນທີ 1 ກໍລະກົດ 2023)



**ພາຊະນະສຳລັບການບໍລິການທີ່ສາມາດຍ່ອຍສະຫຼາຍໄດ້:** ທໍ່ດູດ, ເຄື່ອງໃຊ້ໃນຄົວ ແລະ ຖ້ວຍແບ່ງສ່ວນທີ່ໃຊ້ເທື່ອດຽວແລ້ວຖິ້ມ ຕ້ອງສາມາດຍ່ອຍສະຫຼາຍໄດ້. ພາຊະນະປລາສະຕິກທີ່ໃຊ້ຄັ້ງດຽວແລ້ວຖິ້ມແມ່ນຖືກຫ້າມ.

(ການປັບປຸງມີຜົນບັງຄັບໃຊ້ໃນວັນທີ 1 ກໍລະກົດ 2023*)



**ກ່ອງໂຟມທີ່ຖືກແບນ:** ບັນດາຫົວໜ່ວຍທຸລະກິດ **ຖືກຫ້າມຈາກການນຳໃຊ້ກ່ອງໂຟມປລາສະຕິກ** (EPS, Styrofoam™) ເປັນບັນຈຸພັນ.

(ມີຜົນບັງຄັບໃຊ້ໃນວັນທີ 1 ກໍລະກົດ 2009)

*ທໍ່ດູດປລາສະຕິກທີ່ມີຄວາມຍືດຍຸ່ນແມ່ນອະນຸຍາດໃຫ້ໃຊ້ເມື່ອລູກຄ້າຕ້ອງການຍ້ອນສະພາບທາງດ້ານຮ່າງກາຍ ຫຼື ທາງການແພດເທົ່ານັ້ນ.

## ກົດໝາຍຂອງລັດວໍຊິງຕັນ:



**ກົດໝາຍວ່າດ້ວຍການນຳໃຊ້ຄັ້ງດຽວແລ້ວຖິ້ມ:** *RCW (Revised Code of Washington) 70A.245.080*

**ບັນດາຫົວໜ່ວຍທຸລະກິດອາດຈະບໍ່ໃຊ້ພາຊະນະທີ່ໃຊ້ຄັ້ງດຽວແລ້ວຖິ້ມ** ໂດຍອັດຕະໂນມັດ ໃນການສັ່ງອາຫານຂອງລູກຄ້າ, ລວມທັງເຄື່ອງໃຊ້, ທໍ່ດູດ, ບັນຈຸພັນເຄື່ອງປຸງ ແລະ ຝາປິດປລາສະຕິກ ສຳລັບເຄື່ອງດື່ມເຢັນ.

(ມີຜົນບັງຄັບໃຊ້ໃນວັນທີ 1 ກໍລະກົດ 2022)



**ການຫ້າມນຳໃຊ້ຖົງຢາງ:** *ພາກທີ 70A.530 RCW*

**ຖົງປລາສະຕິກຫິ້ວ<u>ແບບໃຊ້ຄັ້ງດຽວແລ້ວຖິ້ມ</u>** ແມ່ນຖືກຫ້າມ ໃນທຸລະກິດບໍລິການອາຫານ, ຮ້ານຂາຍເຄື່ອງແຫ້ງ ແລະ ຮ້ານຂາຍຍ່ອຍ. ການຂາຍ ແລະ ການນຳໃຊ້ຖົງຢາງ <u>ປລາສະຕິກ</u> ສີຂຽວແມ່ນຖືກຫ້າມ.

(ມີຜົນບັງຄັບໃຊ້ໃນວັນທີ 1 ຕຸລາ 2021)




**ການຕິດສະຫຼາກສາມາດຍ່ອຍສະຫຼາຍໄດ້:** RCW 70A.455 ຜະລິດຕະພັນສຳລັບການຫຸ້ມຫໍ່ທີ່ສາມາດຍ່ອຍສະຫຼາຍໄດ້ ຕ້ອງ **ຕິດສະຫຼາກເປັນ 'ສາມາດຍ່ອຍສະຫຼາຍໄດ້' ແລະ ໃສ່ເຄື່ອງໝາຍເພື່ອລະບຸ ຢ່າງເໝາະສົມ** ເຊັ່ນ: ແຖບລາຍສີຂຽວ/ສີນ້ຳຕານ ແລະ/ຫຼື ເຄື່ອງໝາຍການອະນຸມັດ.

(ມີຜົນບັງຄັບໃຊ້ເລີ່ມແຕ່ວັນທີ 1 ກໍລະກົດ 2024)

**ຫຼຸດຜ່ອນສິ່ງເສດເຫຼືອ ແລະ ປະຢັດເງິນໂດຍການເກັບວັດຖຸທີ່ສາມາດຣີໄຊເຄີນໄດ້ ແລະ ສາມາດຍ່ອຍສະຫຼາຍໄດ້ ອອກຈາກການຝັງຂີ້ເຫຍື້ອ ແລະ ການປ່ຽນຈາກການນຳໃຊ້ຄັ້ງດຽວແລ້ວຖິ້ມມາເປັນພາຊະນະສຳລັບການບໍລິການທີ່ສາມາດນຳມາໃຊ້ຄືນໄດ້ ສຳລັບການບໍລິການໃນສະຖານທີ່.**

**ຕິດຕໍ່ GreenBusiness@Seattle.Gov ສຳລັບການຊ່ວຍເຫຼືອ ແລະ ແຫຼ່ງຊັບພະຍາກອນແບບບໍ່ເສຍຄ່າ ສຳລັບການປະຕິບັດຄຳສັ່ງເຫຼົ່ານີ້.**

# Seattle Public Utilities

# ແຫຼ່ງຂໍ້ມູນ

## ການຊ່ວຍເຫຼືອຟຣີສຳລັບທຸລະກິດບໍລິການອາຫານ ເພື່ອປະຕິບັດຕາມຂໍ້ກຳນົດໃນການຫຸ້ມຫໍ່ອາຫານ.

**ສັ່ງໂປດສະເຕີ ແລະ ສະຫຼາກຕິດຖັງຂີ້ເຫຍື້ອ ຫຼື ສ້າງໂປດສະເຕີທີ່ກຳໜົດເອງຂອງທ່ານແບບບໍ່ເສຍຄ່າ ທີ່ seattle.gov/utilities/ForBusinesses/SolidWaste/FoodYardBusinesses/Commercial/WastePosterOrderForm.**

ພື້ນທີ່ຮັບປະທານອາຫານຂອງຮ້ານອາຫານ (ຈຸດສຳລັບສາມຄົນ)




ການເກັບເຮືອນຄົວຮ້ານອາຫານ
(ມີໃຫ້ເປັນຫຼາຍພາສາ)




ໂປດສະເຕີແບບກຳນົດເອງແມ່ນມີໃຫ້







**ເລືອກສິ່ງທີ່ສາມາດນຳມາໃຊ້ຄືນໄດ້ດ້ວຍ Reuse Seattle!**

**ReuseSeattle**

ເຂົ້າຮ່ວມຈຳນວນທຸລະກິດ ແລະ ຄູ່ຮ່ວມມືທີ່ເພີ່ມຂຶ້ນ ເພື່ອປ່ຽນຈາກການນຳໃຊ້ຄັ້ງດຽວໄປສູ່ການນຳມາໃຊ້ຄືນໃໝ່. ສຶກສາເພີ່ມເຕີມ ໄດ້ທີ່:

**ReuseSeattle.org**

## ຜູ້ໃຫ້ບໍລິການເກັບ - ທ່ານກຳລັງປະສົບບັນຫາການພາດການເກັບ ຫຼື ການບໍລິການບໍ? ຕິດຕໍ່ຜູ້ໃຫ້ບໍລິການຂອງທ່ານ!

| RECOLOGY CLEANSCAPES | WASTE MANAGEMENT | REPUBLIC | CEDAR GROVE | SEADRUNAR |
|---|---|---|---|---|
| ຂີ້ເຫຍື້ອ \| ການຣີໄຊເຄິນ \| ການຍ່ອຍສະຫຼາຍ | ຂີ້ເຫຍື້ອ \| ການຣີໄຊເຄິນ \| ການຍ່ອຍສະຫຼາຍ | ການຣີໄຊເຄິນ \| ການຍ່ອຍສະຫຼາຍ | ການຣີໄຊເຄິນ \| ການຍ່ອຍສະຫຼາຍ | ການຣີໄຊເຄິນ |
| 206-250-7500 | 800-592-9995 | 206-332-7777 | 877-994-4466 | 206-467-7550 |
| info@recologycleanscapes.com | ຣີໄຊເຄິນnw@wm.com | infoseattle@republicservices.com | help@cgcompost.com | info@seadrunarrecycling.com |

## ຂໍ້ມູນຜູ້ຂາຍ

ຕິດຕໍ່ໂຄງການທຸລະກິດສີຂຽວ ສຳລັບບັນຈຸພັນ, ຖັງຂີ້ເຫຍື້ອ ແລະ ຂໍ້ມູນການບໍລິການເພີ່ມເຕີມ.



### ບັນຈຸພັນທີ່ສາມາດຍ່ອຍສະຫຼາຍໄດ້

ຕິດຕໍ່ຜູ້ສະໜອງ ແລະ ຜູ້ຜະລິດບັນຈຸພັນທີ່ສາມາດຍ່ອຍສະຫຼາຍໄດ້ ແລະ ນຳໄປຣີໄຊເຄິນໄດ້

bit.ly/spu-food-pack-aging



### ຖັງເກັບມ້ຽນຂີ້ເຫຍື້ອໃນເຮືອນ

ຕິດຕໍ່ຜູ້ສະໜອງ ແລະ ຜູ້ຜະລິດຖັງເກັບມ້ຽນຂີ້ເຫຍື້ອໃນເຮືອນ.




### ການບໍລິການເກັບ

ິດຕໍ່ພົວພັນຜູ້ໃຫ້ບໍລິການສຳລັບການເກັບຂີ້ເຫຍື້ອທີ່ສາມາດຍ່ອຍສະຫຼາຍ ແລະ ນຳໄປຣີໄຊເຄິນໄດ້.

Seattle Public Utilities | EnviroStars

bit.ly/SPUGBP

For interpretation services please call SPU at 206-684-3000.
如需口譯服務請電 206-684-3000。
통역 서비스를 원하시면 206-684-3000 번으로 전화해 주십시오.
Wixii adeegyada turjubaanka fadlan wac 206-684-3000.
Para servicios de traducción, por favor llame al 206-684-3000.
Para sa serbisyo ng tagapagpaliwanag, tumawag sa 206-684-3000.
Muốn yêu cầu dịch vụ thông dịch xin gọi số 206-684-3000.

FC3.2023.ລາວ